ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ມະຕິ ກອງປະຊຸມ

## ປຶກສາຫາລື ວຽກງານ 4 ອົງການ ສືບສວນ - ສອບສວນ ຂອງ ເຈົ້າໜ້າທີ່ ກ່ຽວກັບ ການກວດກາ ແລະ ດຳເນີນ ຄະດີ ປ່າໄມ້

## ຄັ້ງທີ I , ວັນທີ 29 - 30/01/2009

ອີງຕາມ ບົດບັນທຶກກອງປະຊຸມ ຄັ້ງວັນທີ 29 - 30/01/2009. ຢູ່ທີ່ ຫ້ອງປະຊຸມ ກົມປ່າໄມ້ ກະຊວງ ກະສິກຳ ແລະ ປ່າໄມ້ ໄດ້ຈັດ ກອງປະຊຸມ ປຶກສາຫາລື ວຽກງານ 4 ອົງການ ສືບສວນ - ສອບສວນ ຂອງ ເຈົ້າໜ້າທີ່ ກ່ຽວກັບ ການກວດກາ ແລະ ດຳເນີນ ຄະດີປ່າໄມ້ ຄັ້ງທີ I ຂຶ້ນ ພາຍໃຕ້ ການເປັນປະທານຮ່ວມ ລະຫວ່າງ ທ່ານ ຄຳເຈນ ວົງໂພສີ ລັດຖະມົນຕີ ຊ່ວຍວ່າການ ກະຊວງ ກະສິກຳ ແລະ ປ່າໄມ້, ທ່ານ ສົມລິດ ຈັນທະຈັກ ຮອງໄອຍະການປະຊາຊົນສູງສຸດ ແລະ ທ່ານ ພົນຈັດຕະວາ ເສັ່ງສຸກ ສົມພະວົງ ຫົວໜ້າ ກົມ ໃຫຍ່ຕຳຫຼວດ ກະຊວງ ປ້ອງກັນຄວາມສະຫງົບ, ຊຶ່ງມີຜູ້ແທນ ເຂົ້າຮ່ວມ ທັງໝົດ 120 ຄົນ (ຍິງ 5 ຄົນ) ທີ່ມາ ຈາກພາກສ່ວນຕ່າງໆ ດັ່ງລຸ່ມນີ້ :

ສະພາແຫ່ງຊາດ, ສານປະຊາຊົນສູງສຸດ, ໄອຍະການ ປະຊາຊົນສູງສຸດ, ສຳນັກງານນາຍົກ ລັດຖະມົນຕີ, ຄະນະກຳມະການ ກວດກາ ສູນກາງ, ກະຊວງ ຍຸຕິທຳ, ກະຊວງ ປ້ອງກັນ ປະເທດ, ກະຊວງ ປ້ອງກັນຄວາມສະຫງົບ, ກະຊວງ ການເງິນ, ກະຊວງ ກະສິກຳ ແລະ ປ່າໄມ້, ກະຊວງ ອຸດສາຫະກຳ ແລະ ການຄ້າ, ພະແນກ ອຸດສາຫະກຳ ແລະ ການຄ້າ, ພະແນກ ກະສິກຳ ແລະ ປ່າໄມ້ ນະຄອນຫຼວງ, ກອງ ກວດກາປ່າໄມ້ ປະຈຳ ແຂວງ ແລະ ນະຄອນຫຼວງ ແລະ ບັນດາຂະແໜງການ ກ່ຽວຂ້ອງ.

ຈຸດປະສົງ ຂອງ ກອງປະຊຸມນີ້ ແນໃສ່ :

1. ເພື່ອສັງເກດ ຕີລາຄາ ການຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍ ປ່າໄມ້ ແລະ ກົດໝາຍ ວ່າດ້ວຍ ສັດນ້ຳ ແລະ ສັດປ່າ ໃນ ໄລຍະຜ່ານມາມີ ຜົນງານ,ດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ສາຍເຫດ ຕ່າງໆ.
2. ເພື່ອພ້ອມກັນ ຄົ້ນຄວ້າ ເອກະພາບ ແບບແຜນວິທີເຮັດວຽກ, ກົນໄກພົວພັນ ປະສານສົມທົບ ລະຫວ່າງ ອົງການ ສືບສວນ - ສອບສວນ ດ້ວຍກັນ, ລະຫວ່າງ ອົງການ ສືບສວນ - ສອບສວນ ກັບ ອົງການອື່ນ ເພື່ອແນ່ໃສ່ ເຮັດໃຫ້ ການປະຕິບັດ ໜ້າທີ່ ຂອງ ແຕ່ລະ ພາກສ່ວນ ໄປຕາມ ພາລະ ບົດບາດ, ຂອບເຂດ, ສິດ ແລະ ໜ້າທີ່ຂອງກັນ ແລະ ກັນ.
3. ເພື່ອຄົ້ນ[illegible]ຄວາມເປັນເອກະພາບ ກ່ຽວກັບ ຂັ້ນຕອນ ການກວດກາ ແລະ ດຳເນີນ ຄະດີ ການທຳລາຍ ປ່າໄມ້ ຕາມ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງ 4 ເຈົ້າໜ້າທີ່ ຕາມ ຂະບວນການຍຸຕິທຳ, ຮັບປະກັນ ໃຫ້ການປົກປ້ອງ ກົດໝາຍ ມີຄວາມສັກສິດ, ທ່ຽງທຳ ເພື່ອການ ແກ້ໄຂ ຂໍ້ຂັດແຍ່ງຕ່າງໆ ຢູ່ໃນ ສັງຄົມ ໃຫ້ມີຄວາມສະຫງົບ.

ຜ່ານການຮັບຟັງ ການລາຍງານ ແລະ ການປະກອບຄຳເຫັນ ຂອງພາກສ່ວນຕ່າງໆ ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານ ຂອງອົງການສືບສວນ-ສອບສວນ ເວົ້າລວມ, ການກວດກາ ແລະ ດຳເນີນຄະດີ ຕໍ່ການທຳລາຍປ່າໄມ້, ສັດນ້ຳ ແລະ ສັດປ່າ ເວົ້າສະເພາະ, ກອງປະຊຸມຈຶ່ງໄດ້ຕົກລົງເປັນເອກະພາບກັນ ດັ່ງນີ້:

## I. ສະພາບ ການເຄື່ອນໄຫວ ຂອງ ອົງການ ສືບສວນ - ສອບສວນ ຜ່ານມາ :

ໃນ ໄລຍະຜ່ານມາ, ໂດຍສະເພາະ ພາຍຫລັງ ມີກົດໝາຍ ວ່າດ້ວຍ ປ່າໄມ້ ສະບັບປັບປຸງ ເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007 ແລະ ກົດໝາຍ ວ່າດ້ວຍ ສັດນ້ຳ ແລະ ສັດປ່າ ສະບັບ ເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007, ເຖິງວ່າ ສະພາບ ປະກົດການຫຍໍ້ທໍ້ ໃນ ຂົງເຂດ ທຸລະກິດໄມ້, ສັດນ້ຳ ແລະ ສັດປ່າ ຍັງເກີດມີຂຶ້ນ ໃນ ທຸກຮູບແບບ, ທຸກລະດັບ ກໍຕາມ ແຕ່ໂດຍພື້ນຖານ ແລ້ວ ສະພາບການ ແລະ ບັນຫາຕ່າງໆ ໄດ້ຮັບ ການແກ້ໄຂ ຢ່າງຕັ້ງໜ້າກວ່າເກົ່າ ດ້ວຍການສົມທົບ ລະຫວ່າງ ການແກ້ໄຂ ຕາມ ມາດຕະການ ທາງບໍລິຫານ, ທາງອາຍາ ແລະ ທາງແພ່ງ ໂດຍມີການ ເຂົ້າຮ່ວມ ຂອງບັນດາອົງການ ສືບສວນ - ສອບສວນ ກໍຄື ເຈົ້າໜ້າທີ່ກ່ຽວຂ້ອງອື່ນ ທັງມີການ ປະກອບສ່ວນ ຂອງ ການຈັດຕັ້ງ ສັງຄົມ ແລະ ປະຊາຊົນ ບັນດາເຜົ່າ.

ຄຽງຄູ່ ກັບ ດ້ານດີ, ຜົນງານ ດັ່ງກ່າວ ກອງປະຊຸມ ໄດ້ເອກະພາບວ່າ ພວກເຮົາຍັງຈະຕ້ອງ ໄດ້ ເອົາໃຈໃສ່ຕື່ມຫຼາຍດ້ານ ເປັນຕົ້ນແມ່ນ ການໂຄສະນາເຜີຍແຜ່ ເນື້ອໃນ ລະບຽບກົດໝາຍຕ່າງໆ ກ່ຽວກັບປ່າໄມ້, ສັດນ້ຳ ແລະ ສັດປ່າ ຍັງບໍ່ທັນເລິກເຊິ່ງ ທັງບໍ່ທັນທົ່ວເຖິງ, ຄວາມຮູ້, ຄວາມສາມາດ ຂອງເຈົ້າໜ້າທີ່ ໃນບາງພາກສ່ວນ ໂດຍສະເພາະແມ່ນ ຂອງເຈົ້າໜ້າທີ່ປ່າໄມ້ ຈະຕ້ອງໄດ້ສືບຕໍ່ ເອົາ ໃຈໃສ່ ປັບປຸງ ແລະ ຍົກສູງຂຶ້ນຕື່ມອີກຫຼາຍ. ຂອດການປະສານສົມທົບ ລະຫວ່າງ ອົງການ ສືບສວນ - ສອບສວນ ດ້ວຍກັນ, ລະຫວ່າງ ອົງການສືບສວນ-ສອບສວນ ກັບອົງການ ໄອຍະການ ກໍຍັງຈະ ຕ້ອງເອົາໃຈໃສ່ ແລະ ເພີ່ມທະວີ ຂຶ້ນກວ່າເກົ່າ ເພື່ອເຮັດໃຫ້ວຽກງານ ສືບສວນ-ສອບສວນ ແລະ ດຳເນີນຄະດີ ທີ່ພົວພັນເຖິງປ່າໄມ້, ຊັບພະຍາກອນປ່າໄມ້, ສັດນ້ຳ ແລະ ສັດປ່າ ໄປຕາມລະບຽບ ກົດໝາຍທີ່ໄດ້ກຳນົດໄວ້ ໃຫ້ມີປະສິດທິພາບສູງຂຶ້ນກວ່າເກົ່າ.

## II. ກ່ຽວກັບ ທິດທາງ ໃນຕໍ່ໜ້າ :

1. ຕ້ອງເພີ່ມທະວີ ການໂຄສະນາເຜີຍແຜ່ ລະບຽບກົດໝາຍ ວ່າດ້ວຍ ປ່າໄມ້, ສັດນ້ຳ ແລະ ສັດປ່າ ໃຫ້ ແກ່ ຖັນແຖວພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນ ບັນດາເຜົ່າ ໃຫ້ຮັບຮູ້ ແລະ ເຂົ້າໃຈ; ເພີ່ມທະວີ ການປະຕິບັດວຽກງານ ຂອງເຈົ້າໜ້າທີ່ ສືບສວນ-ສອບສວນ ໂດຍສະເພາະ ແມ່ນໃຫ້ ສືບຕໍ່ປັບປຸງ ກົງຈັກການຈັດຕັ້ງ ຂອງເຈົ້າໜ້າທີ່ປ່າໄມ້ ໃຫ້ເຂັ້ມແຂງ ທັງສ້າງຕາໜ່າງ ວຽກງານ ດັ່ງກ່າວ ລົງສູ່ທ້ອງຖິ່ນຮາກຖານ ໃຫ້ທົ່ວເຖິງ.
2. ປັບປຸງ ກົນໄກ ແບບແຜນວິທີເຮັດວຽກ ແລະ ການປະສານງານ ລະຫວ່າງ ອົງການ ສືບສວນ-ສອບ ສວນ ດ້ວຍກັນ ແລະ ອົງການ ສືບສວນ - ສອບສວນ ກັບ ໄອຍະການໃຫ້ມີປະສິດທິຜົນກ່ວາເກົ່າ.
3. ທຸກພາກສ່ວນ ທີ່ເຂົ້າຮ່ວມກອງປະຊຸມ ໄດ້ເຫັນດີ ເປັນເອກະພາບ ທາງດ້ານຫຼັກການໃນການມອບ ວຽກງານ ການແກ້ໄຂ ຄະດີໄມ້, ທີ່ດິນປ່າໄມ້, ສັດນ້ຳ ແລະ ສັດປ່າ ໃຫ້ເຈົ້າໜ້າທີ່ ປ່າໄມ້ເປັນຜູ້ ດຳເນີນ ຕາມລະບຽບກົດໝາຍ ເພື່ອປະກອບສຳນວນຄະດີ ສົ່ງໃຫ້ໄອຍະການ ສັ່ງຟ້ອງ ຂຶ້ນສານ. ສ່ວນອັນລະອຽດນັ້ນສະເໜີຕໍ່ອົງການໄອຍະການປະຊາຊົນສູງສຸດເປັນໃຈກາງຮຽກປະຊຸມ

ລະຫວ່າງອົງການໄອຍະການກັບອົງການສືບສວນ-ສອບສວນ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຄົ້ນຄວ້າ, ວາງລະບຽບການຈະແຈ້ງຂຶ້ນ.

4. ການດຳເນີນຄະດີໄມ້, ສັດນ້ຳ ແລະ ສັດປ່າ ທຸກພາກສ່ວນ ທີ່ປະກອບຄຳເຫັນ ໂດຍສະເພາະແມ່ນ ອົງການ ໄອຍະການ ປະຊາຊົນສູງສຸດ, ສະພາແຫ່ງຊາດ ແມ່ນເຫັນດີ ໃຫ້ດຳເນີນຕາມ ຂະບວນຍຸຕິທຳ. ຖ້າຄະດີ ພົວພັນກັບພາກສ່ວນໃດ ແມ່ນເຊີນເອົາ ພາກສ່ວນນັ້ນມາປຶກສາຫາລື.

5. ເຫັນດີ ໃຫ້ທຸກພາກສ່ວນ ປະຕິບັດໜ້າທີ່ ຕາມ ພາລະບົດບາດ ຂອງໃຜລາວ ຕາມກົດໝາຍ ໄດ້ກຳນົດໄວ້..

6. ເຫັນດີ ໃຫ້ມີການປັບປຸງ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງ ເຈົ້າໜ້າທີ່ປ່າໄມ້ ໃຫ້ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ.

7. ເຫັນດີໃຫ້ມີນະໂຍບາຍ ເງິນບຳເນັດ ແກ່ ຜູ້ທີ່ເຂົ້າຮ່ວມ ໃນການຕ້ານ ແລະ ສະກັດກັ້ນ ການລັກລອບ ຕັດໄມ້ ທຳລາຍປ່າ ແລະ ການຊື້ - ຂາຍ ສັດນ້ຳ ແລະ ສັດປ່າ ທີ່ຜິດກົດໝາຍ.

8. ເຫັນດີໃຫ້ມີການຈັດກອງປະຊຸມປຶກສາຫາລື ແລກປ່ຽນ ຂໍ້ມູນຂ່າວສານ ແລະ ການປະສານງານ ຂອງເຈົ້າໜ້າທີ່ງກ່ຽວຂ້ອງ ຢ່າງໜ້ອຍ 1 ຄັ້ງ ຕໍ່ປີ ໂດຍ ສັບປ່ຽນກັນ ເປັນເຈົ້າພາບ ພ້ອມທັງ ເຊື້ອເຊີນ ໄອຍະການ ປະຊາຊົນສູງສຸດ ແລະ ພາກສ່ວນ ກ່ຽວຂ້ອງ ເຂົ້າຮ່ວມ.

9. ເຫັນດີຈັດໃຫ້ມີ ການຝຶກອົບຮົມ ໃຫ້ບັນດາ ເຈົ້າໜ້າທີ່ ສືບສວນ - ສອບສວນ ກ່ຽວກັບ ວິທີການສືບສວນ - ສອບສວນ ແລະ ການປະກອບ ສຳນວນຄະດີ ໃຫ້ຖືກຕ້ອງ ຕາມ ລະບຽບກົດໝາຍ.,

10. ສະເໜີໃຫ້ພາກສ່ວນກ່ຽວຂ້ອງ ກວດກາ ແລະ ປັບປຸງຄືນ ກົດໝາຍທີ່ດິນ ແລະ ບາງຂໍ້ ຂອງຄຳສັ່ງເລກທີ 17/ນຍ ທີ່ເຫັນວ່າ ບໍ່ສອດຄ່ອງກັບ ກົດໝາຍປ່າໄມ້.

11. ເຫັນດີໃຫ້ຜູ້ແທນກອງປະຊຸມທຸກພາກສ່ວນ ນຳເອົາເນື້ອໃນຈິດໃຈກອງປະຊຸມຄັ້ງນີ້ ລາຍງານຕໍ່ການນຳຂອງຕົນຊາບ ເພື່ອໃຫ້ການນຳໄດ້ສ້າງເງື່ອນໄຂຄວາມສະດວກໃນເວລາຈັດຕັ້ງປະຕິບັດເນື້ອ ໃນບົດບັນທຶກສະບັບນີ້.

ກອງປະຊຸມ ໄດ້ປິດລົງ ໃນ ເວລາ 16:00 ໂມງ ຂອງ ວັນທີ 30/01/2009.

<u>ປະທານຮ່ວມ</u>

| ຮອງ ໄອຍະການປະຊາຊົນສູງສຸດ | ລັດຖະມົນຕີຊ່ວຍວ່າການ<br>ກະຊວງ ກະສິກຳ ແລະ ປ່າໄມ້ | ຫົວໜ້າ ກົມໃຫຍ່ຕຳຫຼວດ<br>ກະຊວງ ປ້ອງກັນຄວາມສະຫງົບ |
|---|---|---|
| ສົມລິດ ຈັນທະຈັກ | ຄຳແຈນ ວົງໂພສີ | ພົຈວ ເສັ່ນສຸກ ສົມພະວົງ |